# ບົດສັງລວມໂຄງການຫຍໍ້
# ກ່ຽວກັບການ ພັດທະນາສວນສີໂຄດຕະບອງ ຢູ່ບ້ານໜອງດ້ວງເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ.

*ທີ່ສະເໜີຕໍ່ : ກອງປະຊຸມເຈົ້າຄອງ-ຮອງເຈົ້າຄອງ ຮ່ວມກັບພະແນກການ, ອົງການລັດທຽບເທົ່າພະແນກ ຂັ້ນ ນະຄອນຫຼວງວຽງຈັນ ແລະ ເມືອງທີ່ກ່ຽວຂ້ອງ ຄັ້ງທີ 42 ສະໄໝ VII, ຄັ້ງວັນທີ 25 ພະຈິກ 2024*

*ຮຽນ : - ທ່ານ ເຈົ້າຄອງ, ນະຄອນຫຼວງວຽງຈັນ, ທີ່ເຄົາລົບ ແລະ ນັບຖືຢ່າງສູງ;*

*- ທ່ານ ຮອງເຈົ້າຄອງ, ນະຄອນຫຼວງວຽງຈັນ, ທີ່ເຄົາລົບ ແລະ ນັບຖືຢ່າງສູງ;*

*- ບັນດາທ່ານ ເຈົ້າເມືອງ, ຫົວໜ້າພະແນກ, ຮອງພະແນກ ທີ່ນັບຖືຢ່າງສູງ;*

ພະແນກແຜນການ ແລະ ການລົງທຶນ, ຫ້ອງການບໍລິການ ການລົງທຶນປະຕູດຽວ ຂັ້ນນະຄອນຫຼວງວຽງຈັນ ຂໍຖືເປັນກຽດຮຽນລາຍງານ ແລະ ຂໍທິດຊີ້ນຳກ່ຽວກັບການພັດທະນາສວນສີໂຄດຕະບອງ ຢູ່ບ້ານໜອງດ້ວງເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ລາຍລະອຽດດັ່ງນີ້:

## 1) <u>ສະພາບລວມຂອງໂຄງການ.</u>

ໃນໄລຍະຜ່ານມາກໍມີຫຼາຍພາກສ່ວນທຸລະກິດໄດ້ສະເໜີມາຫາ ພະແນກແຜນການ ແລະ ການລົງທຶນ, ທຶນດຽວ ນະຄອນຫຼວງວຽງຈັນ ເພື່ອຂໍລົງຫ້ອງການບໍລິການການລົງທຶນປະຕູປັບປຸງ ແລະ ພັດທະນາ ສວນສີໂຄດຕະບອງໃຫ້ເປັນສວນສາທາລະນະ ຕິດພັນກັບການຄ້າ ແລະ ການບໍລິການ, ຕໍ່ກັບບັນຫາດັ່ງກ່າວ, ນະຄອນຫຼວງວຽງຈັນ ໄດ້ເປີດກອງປະຊຸມກ່ຽວກັບການພັດທະນາສວນສີໂຄດຕະບອງ ຢູ່ບ້ານໜອງດ້ວງເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ຄັ້ງວັນທີ 03 ກໍລະກົດ 2024. ໂດຍພາຍໃຕ້ການເປັນປະທານຂອງ ທ່ານ ສີລິລາດທົງສິນ ທອງເພັງ, ຮອງເຈົ້າຄອງ ນະຄອນຫຼວງວຽງຈັນ ເຊິ່ງໄດ້ຕົກລົງເປັນເອກະພາບກັນວ່າ: **"ມອບໃຫ້ພະແນກແຜນການ ແລະ ການລົງທຶນ ເປັນເຈົ້າການສົມທົບກັບພະແນກໂຍທາທິການ ແລະ ຂົນສົ່ງ ນວ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າລະບຽບຫຼັກການ, ກຳນົດເງື່ອນໄຂເພື່ອທາບທາມຜູ້ທີ່ມີຄວາມສົນໃຈມາ ຮ່ວມພັດທະນາສວນດັ່ງກ່າວ ຕາມແຜນຜັງຂອງນະຄອນຫຼວງວຽງຈັນ ກຳນົດໄວ້, ໂດຍມອບໃຫ້ເມືອງເປັນຄູ່ສັນຍາ"**. ຈາກນັ້ນ, ນະຄອນຫຼວງວຽງຈັນ ກໍ່ໄດ້ອອກຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະວິຊາການ ລົງກວດກາຂອບເຂດພື້ນທີ່ ແລະ ປະເມີນມູນຄ່າຊັບສິນຂອງສວນສີໂຄດຕະບອງ ຢູ່ບ້ານໜອງດ້ວງເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ສະບັບເລກທີ 700/ຈນວ, ລົງວັນທີ 30 ກໍລະກົດ 2024, ໂດຍແມ່ນ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ເປັນຫົວໜ້າຄະນະ, ເມືອງສີໂຄດຕະບອງ ເປັນຮອງ ແລະ ພະແນກການກ່ຽວຂ້ອງຮ່ວມເປັນຄະນະ;

## 2) <u>ການຄົ້ນຄວ້າຜ່ານມາ</u>

ໂດຍປະຕິບັດຕາມ ຂໍ້ຕົກລົງ ຂອງທ່ານ ເຈົ້າຄອງ ນະຄອນຫຼວງວຽງຈັນ ສະບັບເລກທີ 700/ຈນວ, ລົງວັນທີ 30 ກໍລະກົດ 2024, ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ໃນນາມຫົວໜ້າຄະນະຮັບຜິດຊອບ ໄດ້ສົມທົບກັບພາກສ່ວນກ່ຽວຂ້ອງລົງກວດກາຂອບເຂດພື້ນທີ່, ປະເມີນມູນຄ່າຊັບສິນຂອງສວນສີໂຄດຕະບອງ ແລະ ໄດ້ລາຍງານຜົນຂອງການກວດກາ ແລະ ປະເມີນມູນຄ່າຊັບສິນ ຂອງສວນສີໂຄດຕະບອງ ຫາ ທ່ານ ເຈົ້າຄອງ ນະຄອນ ຫຼວງວຽງຈັນ (ຕາມບົດລາຍງານ ສະບັບເລກທີ 9262/ຍທຂ.ນວ, ລົງວັນທີ 11 ກັນຍາ 2024) ເຊິ່ງສັງລວມເນື້ອໃນໄດ້ດັ່ງນີ້:

- ການກວດກາຂອບເຂດທີ່ດິນ ມີເນື້ອທີ່ທັງໝົດ 38.645 ຕາແມັດ ຕາມໃບຕາດິນເລກທີ 467, ຕອນດິນເລກທີ 194 ຕັ້ງຢູ່ບ້ານໜອງດ້ວງເໜືອ, ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ;
- ຜ່ານມາໃນປີ 2020 ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ ໄດ້ອະນຸມັດໃຫ້ ບໍລິສັດ ຄູນທະວົງ ກໍ່ສ້າງຄົບວົງຈອນ ຈຳກັດ ເຂົ້າໄປພັດທະນາ ສວນສີໂຄດຕະບອງ ເຊິ່ງບໍລິສັດດັ່ງກ່າວ ໄດ້

ລົງທຶນກໍ່ສ້າງເປັນມູນຄ່າ 750.383.460 ກີບ (ຕາມການປະເມີນລາຄາຂອງ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ສະບັບເລກທີ 5773/ຍທຂ.ນວ, ລົງວັນທີ 23 ສິງຫາ 2021);

- ບໍລິສັດ ບຸນທາລາ ໂຊກຈະເລີນຊັບ ກໍ່ສ້າງ-ຂົວທາງ ຈຳກັດຜູ້ດຽວ ໃນນາມສະມາຄົມນັກທຸລະກິດໜຸ່ມ ເມືອງສີໂຄດຕະບອງ ໄດ້ຮ່ວມມືກັບ ອົງການປົກຄອງເມືອງສີໂຄດຕະບອງ ເຂົ້າໄປບູລະນະສ້ອມແປງ ຫ້ອງນໍ້າ, ຕິດຕັ້ງໄຟໂຊລາເຊວອ້ອມໜອງ ແລະ ທາງເຂົ້າ, ວາງໄຟຟ້າ ເດີນລະບົບໄຟຟ້າໃໝ່ໝົດ, ອາຄານຫ້ອງການ, ປູຕົວໜອນທາງຍ່າງຕາມແຄມໜອງ ທີ່ເປ່ເພ, ກໍ່ສ້າງຄູກາງທາງເຂົ້າສວນ. ບັນດາ ໜ້າວຽກທັງໝົດທີ່ກ່າວມາຂ້າງເທິງນັ້ນ ທາງດ້ານນິຕິກຳຢັ້ງຢືນແມ່ນບໍ່ມີ, ມີແຕ່ບົດປະເມີນລາຄາຂອງ ບໍລິສັດເອງໃນມູນຄ່າເບື້ອງຕົ້ນ 1.009.239.000ກີບ ແລະ ບົດຄິດໄລ່ເພີ່ມລະອຽດຕື່ມໃນມູນຄ່າ 1.211.563.100 ກີບ, ແຕ່ຜ່ານການກວດກາຕົວຈິງ ຂອງຄະນະວິຊາການຕາມໜ້າວຽກຕ່າງໆຂອງ ບໍລິສັດ ບຸນທະລາໂຊກຈະເລີນ ກໍ່ສ້າງ ຂົວທາງ ຈຳກັດຜູ້ດຽວ ຂ້າງເທິງນັ້ນ ແມ່ນມູນຄ່າ 463.459.998 ກີບ (ຕາມໃບປະເມີນລາຄາຂອງ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງສີໂຄດ ຕະບອງ ສະບັບເລກທີ 867/ຍທຂ.ສບ,ລົງວັນທີ 04 ກັນຍາ 2024).

ຈາກນັ້ນ, ເມືອງສີໂຄດຕະບອງ ໄດ້ເຮັດບົດລາຍງານ ສະບັບເລກທີ 831/ຈມສບ, ລົງວັນທີ 08 ຕຸລາ 2024 ຫາ ທ່ານ ເຈົ້າຄອງ ນະຄອນຫຼວງວຽງຈັນ ເຊິ່ງສັງລວມເນື້ອໃນໄດ້ວ່າ: ນັບແຕ່ ເດືອນກໍລະກົດ ປີ 2023 ອົງການ ປົກຄອງເມືອງສີໂຄດຕະບອງ ແລະ ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ ໄດ້ສົມທົບກັບ ບໍລິສັດ ບຸນ ທະລາ ໂຊກຈະເລີນຊັບ ກໍ່ສ້າງຂົວທາງ ຕາງໜ້າໂດຍ ທ່ານ ນັນທະສັກ ບຸນລະລາ ເຊິ່ງເປັນປະທານນັກທຸລະກິດໜຸ່ມ ແລະ ທັງເປັນປະທານສະພາການຄ້າ ແລະ ອຸດສາຫະກຳ ເມືອງສີໂຄດຕະບອງ ສຳຫຼວດ ແລະ ປັບປຸງສ້ອມແປງຄືນບາງ ໜ້າວຽກຈຳນວນໜຶ່ງ ດັ່ງນີ້:

1) ປັບປຸງຫ້ອງນໍ້າເດີມ ແລະ ສ້າງຫ້ອງນໍ້າໃໝ່ພ້ອມທັງຕິດຕັ້ງລະບົບນໍ້າຕັ້ງແຕ່ກົງເຕີຫາຫ້ອງນໍ້າ ແລະ ພາຍໃນຫ້ອງນໍ້າ,ຕິດຕັ້ງລະບົບໄຟຟ້າທັງໝົດ ລວມທັງສ້ອມແປງພື້ນຂ້າງຫ້ອງນໍ້າ, ກໍ່ອ່າງລ້າງໃໝ່ ແລະ ອ່າງບຳບັດນໍ້າ, ພ້ອມອະນາໄມສວນ ມູນຄ່າກໍ່ສ້າງ 426,881,000 ກີບ;
2) ຕິດຕັ້ງລະບົບໄຟໂຊລາເຊວອ້ອມໜອງ ແລະ ທາງເຂົ້າ ມູນຄ່າການກໍ່ສ້າງ 109,110,000 ກີບ;
3) ວາງໄຟຟ້າ ເດີນລະບົບໄຟຟ້າຄືນໃໝ່ທັງໝົດ ມູນຄ່າການກໍ່ສ້າງ 225,600,000 ກີບ;
4) ເຄື່ອງໃຊ້ຫ້ອງການ ແລະ ສ້ອມແປງຫ້ອງການຄືນໃໝ່ ມູນຄ່າການກໍ່ສ້າງ 70,060,000 ກີບ;
5) ປູໜອນທາງຍ່າງ ແລະ ສ້ອມແປງທາງຍ່າງອ້ອມໜອງ ມູນຄ່າການກໍ່ສ້າງ120,750,000 ກີບ;
6) ປັບປຸງຄູກາງທາງເຂົ້າສວນ ມູນຄ່າການກໍ່ສ້າງ 89,020,000 ກີບ;
7) ກຳລັງອ້າຍນ້ອງທະຫານປະຈຳການປ້ອງກັນ 2 ສະຫາຍ (8 ເດືອນ) ມູນຄ່າ 60,000,000 ກີບ/ປີ;
8) ມູນຄ່າອາກອນ (10%) 110.142.100 ກີບ;

- **<u>ລວມມູນຄ່າທັງໝົດ 1.211.563.100 ກີບ.</u>**

ຕໍ່ກັບບັນຫາດັ່ງກ່າວ, ໄດ້ມີໜັງສືທາງລັດຖະການ ຂອງຫ້ອງວ່າການ ນະຄອນຫຼວງວຽງຈັນ ສະບັບເລກທີ 1872/ຫວນວ, ລົງວັນທີ 23 ຕຸລາ 2024 ເຊິ່ງມີເນື້ອໃນວ່າ:

1) **ມອບໃຫ້ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ເປັນໃຈກາງສົມທົບກັບເມືອງສີ ໂຄດຕະບອງ ເພື່ອກວດກາ;**
2) **ໃຫ້ພະແນກການເງິນ ນະຄອນຫຼວງວຽງຈັນ ກວດກາຕາມຫຼັກບັນຊີ ໃນແຕ່ລະລາຍຈ່າຍ, ຖ້າບໍ່ມີນິຕິກຳ ບໍ່ອາດນຳໃຊ້ງົບປະມານຊຳລະໄດ້**

ຈາກນັ້ນ, ໃນວັນທີ 06 ພະຈິກ 2024 ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ໄດ້ສົມທົບກັບ ເມືອງສີໂຄດຕະບອງ, ພະແນກການຕ່າງປະເທດ, ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກການເງິນ, ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ ເປີດກອງປະຊຸມຄົ້ນຄວ້າ ແລະ ປຶກສາຫາລືກ່ຽວກັບການພັດທະນາສວນສີໂຄດຕະບອງ ຢູ່ບ້ານໜອງດ້ວງເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ, ກອງປະຊຸມໄດ້ຕົກລົງເປັນເອກະພາບກັນວ່າ:

1) ຄວນຄົ້ນຄວ້າເພື່ອນໍາສະເໜີການນໍາ ນະຄອນຫຼວງວຽງຈັນ ພິຈາລະນາ ລົບລ້າງບົດບັນທຶກ ມອບ-ຮັບ ສວນສາທາລະນະສີໂຄດຕະບອງ ໃຫ້ອົງການປົກຄອງເມືອງສີໂຄດຕະບອງ ເປັນຜູ້ຄຸ້ມຄອງ ມາໃຫ້ ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງວຽງຈັນ ຄຸ້ມຄອງ;
2) ສໍາລັບ ແຜນຜັງພັດທະນາສວນສີໂຄດຕະບອງ, ກອງປະຊຸມເຫັນດີຮັບຮອງເອົາແບບທີ 2 ແຕ່ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ປັບປຸງຕາມຄໍາເຫັນຂອງກອງປະຊຸມດັ່ງນີ້:
    (1) ໃຫ້ປັບປຸງຫ້ອງນໍ້າ ບໍ່ໃຫ້ຢູ່ດ້ານໜ້າຂອງສວນ;
    (2) ເສັ້ນທາງເຂົ້າ-ອອກລົດ ໃຫ້ມີວົງວຽນ ເພື່ອບໍ່ໃຫ້ສັບສົນການສັນຈອນລົດໃນເວລາເຂົ້າອອກ;
    (3) ຮ້ານຂາຍເຄື່ອງບໍ່ໃຫ້ແອອັດເກີນໄປ ເພາະກີດຂວາງປະຊາຊົນທີ່ໄປອອກກໍາລັງກາຍ; ບໍ່ໃຫ້ເຮັດເປັນຕະຫຼາດ;
    (4) ເສັ້ນທາງແມ່ນໃຫ້ມີເສັ້ນດຽວ ແລ້ວມີບ່ອນລ້ຽວກັບ ບໍ່ໃຫ້ລົດແລ່ນອ້ອມໜອງໄດ້ ເພື່ອຄວາມປອດໄພຂອງປະຊາຊົນທີ່ມາອອກກໍາລັງກາຍ;
3) ນອກຈາກແບບທີ່ທາງບໍລິສັດ YINFENG REAL ESTATE SOLE CO.,LTD ໄດ້ອອກແບບຮ່ວມກັບພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ແລ້ວ, ກໍ່ໃຫ້ມີແບບທີ່ເປັນອັນສະເພາະຂອງນະຄອນຫຼວງວຽງຈັນ ເພື່ອເປັນທາງເລືອກໃຫ້ການນໍາ ນະຄອນຫຼວງວຽງຈັນ ພິຈາລະນາ;
4) ມອບໃຫ້ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ປັບປຸງຮ່າງແຈ້ງການທາບທາມ ບໍລິສັດທີ່ຈະເຂົ້າຮ່ວມຮັບເໝົາບໍລິການ ແລະ ບົວລະບັດຮັກສາສວນສີໂຄດຕະບອງ ຢູ່ບ້ານໜອງດ້ວງເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ຕາມຄໍາເຫັນຂອງກອງປະຊຸມ ເປັນຕົ້ນແມ່ນ ກິດຈະກໍາທີ່ສາມາດໃຫ້ບໍລິການໄດ້ມີຫຍັງແດ່?, ບໍລິສັດມີໜ້າທີ່ຮັບຜິດຊອບຫຍັງ? ເງື່ອນໄຂຂອງຜູ້ເຂົ້າຮ່ວມທາບທາມມີຄືແນວໃດ?;
5) ມອບໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ສົມທົບກັບ ພະແນກການເງິນ ນະຄອນຫຼວງວຽງຈັນ ກວດກາຫຼັກການບັນຊີໃນແຕ່ລະລາຍຈ່າຍ ທີ່ບໍລິສັດ ບຸນທາລາ ໂຊກຈະເລີນຊັບ ກໍ່ສ້າງ-ຂົວທາງ ຈໍາກັດຜູ້ດຽວ ໃນນາມສະມາຄົມນັກທຸລະກິດໜຸ່ມເມືອງສີໂຄດຕະບອງ ເຂົ້າໄປບູລະນະສ້ອມແປງສວນສີໂຄດຕະບອງ (ມູນຄ່າ 1.211.563.100 ກີບ) ຕາມບົດລາຍງານຂອງ ເມືອງສີໂຄດຕະບອງ ສະບັບເລກທີ 831/ຈມສບ, ລົງວັນທີ 08 ຕຸລາ 2024;
6) ສໍາລັບການຊ່ວຍເຫຼືອຈາກຕ່າງປະເທດ ພະແນກການຕ່າງປະເທດ ນະຄອນຫຼວງວຽງຈັນ ໄດ້ມີຄໍາເຫັນວ່າ:
    (1) ກ່ຽວກັບການຊ່ວຍເຫຼືອຂອງປະເທດ ສະຫາລັດອາເມລິກາ ຕໍ່ກັບສວນສາທາລະນະສີໂຄດ ແມ່ນເປັນການຊ່ວຍເຫຼືອໃນການບໍາບັດນໍ້າເປື້ອນ, ຕາມການເຮັດວຽກ ແລະ ລົງສໍາຫຼວດ ແມ່ນທາງນັ້ນ ຈະສົ່ງໜັງສືສະເໜີມາຍັງນະຄອນຫຼວງວຽງຈັນ ແຕ່ມາເຖິງປະຈຸບັນ ຍັງບໍ່ທັນໄດ້ສະເໜີມາເທື່ອ.
    (2) ຕໍ່ການຊ່ວຍເຫຼືອຂອງນະຄອນບາງກອກ, ປະເທດໄທ ຕາມການປະສານກັບ ທ່ານ ທູດໄທ ແມ່ນໄດ້ສະເໜີໃຫ້ນະຄອນຫຼວງບາງກອກ ພິຈາລະນາຊ່ວຍ 2 ໂຄງການ ຄື: ໂຄງການປັບປຸງຖະໜົນມິດຕະພາບ ລາວ-ໄທ ແລະ ໂຄງການປັບປຸງສວນສີໂຄດຕະບອງ; ❶ ສໍາລັບສວນສີໂຄດຕະບອງ ຖ້ານະຄອນຫຼວງວຽງຈັນ ມີຮູບ

ແບບ ແລະ ແຜນກິດຈະກໍາໃດ ຊ່ວຍສິ່ງໃຫ້ສະຖານທູດໄທ ເພື່ອຈະໄດ້ສົ່ງໃຫ້ນະຄອນຫຼວງບາງກອກ ພິຈາລະນາໃນການຊ່ວຍເຫຼືອ ໂດຍສະເພາະງົບປະມານຂອງໂຄງການ ຫຼື ຈະຊ່ວຍປະກອບບາງກິດຈະກໍາ ຂອງສວນສີໂຄດຕະບອງ ເນື່ອງຈາກນະຄອນຫຼວງບາງກອກ ຈະບໍ່ໄດ້ນໍາໃຊ້ງົບປະມານຂອງພາກລັດມາ ຊ່ວຍໄດ້ ແຕ່ຈະເປັນການລະດົມພາກທຸລະກິດມາຊ່ວຍ, ❷ ສ່ວນໂຄງການປັບປຸງເສັ້ນທາງມິດຕະພາບ ລາວ-ໄທ ໃນໄລຍະທາງ 3 ກິໂລແມັດ ທາງສະຖານທູດໄທ ກໍ່ໄດ້ນໍາສະເໜີໄປຍັງ ນະຄອນຫຼວງບາງກອກ ແລະ ພາກສ່ວນອື່ນໆ ຂອງ ໄທ ເພື່ອຈະຊ່ວຍໃນໂຄງການດັ່ງກ່າວ ເພື່ອສະເຫຼີມສະຫຼອງ ວັນສ້າງຕັ້ງການ ພົວພັນຮ່ວມມື ລະຫວ່າງ ລາວ.ໄທ-

3) <u>***ການຄົ້ນຄວ້າ ຂອງແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ເຫັນວ່າ:***</u>

(1) ກ່ຽວກັບການຄຸ້ມຄອງສວນສີໂຄດຕະບອງ, ເຫັນຄວນມອບໃຫ້ ຫ້ອງການຄຸ້ມຄອງ ແລະ ບໍລິການຕົວເມືອງ ວຽງຈັນ ເປັນຜູ້ຄຸ້ມຄອງ ແລະ ປົກປັກຮັກສາຄືນ ເພື່ອໃຫ້ສອດຄ່ອງຕາມສິດ ແລະ ພາລະບົດບາດ ໂດຍ ສະເພາະການເຂົ້າໄປບໍາລຸງຮັກສາລະບົບນໍ້າເສຍບໍ່ໃຫ້ມີກິ່ນເໝັນ ແລະ ສະພາບຣົກເຮື້ອທີ່ສົ່ງຜົນກະທົບຕໍ່ ສັງຄົມໃນບໍລິເວນເຂດດັ່ງກ່າວ;

(2) ສໍາລັບແບບແຜນພັດທະນາສວນສີໂຄດຕະບອງ ສະເໜີໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ປັບປຸງຕາມຄໍາເຫັນຂອງກອງປະຊຸມ ຄັ້ງວັນທີ 06 ພະຈິກ 2024, ແລະ ໃຫ້ມີການອອກແບບເພີ່ມຕື່ມ ເປັນອັນ ສະເພາະຂອງ ນະຄອນຫຼວງວຽງຈັນ ເພື່ອເປັນທາງເລືອກໃຫ້ການນໍາ ນະຄອນຫຼວງວຽງຈັນ ພິຈາລະນາ;

(3) ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ສົມທົບກັບ ພະແນກການເງິນ ນະຄອນຫຼວງວຽງຈັນ ຮີບຮ້ອນລົງໄປ ກວດກາຫຼັກການບັນຊີໃນແຕ່ລະລາຍຈ່າຍ ທີ່ບໍລິສັດ ບຸນທາລາ ໂຊກຈະເລີນຊັບ ກໍ່ສ້າງ-ຂົວທາງ ຈໍາກັດຜູ້ ດຽວ ໃນນາມສະມາຄົມນັກທຸລະກິດໜຸ່ມເມືອງສີໂຄດຕະບອງ ເຂົ້າໄປບູລະນະສ້ອມແປງສວນສີໂຄດຕະບອງ (ມູນຄ່າ 1.211.563.100 ກີບ) ຕາມບົດລາຍງານຂອງ ເມືອງສີໂຄດຕະບອງ ສະບັບເລກທີ 831/ຈມສບ, ລົງ ວັນທີ 08 ຕຸລາ 2024;

(4) ສ່ວນການຊ່ວຍເຫຼືອຂອງນະຄອນບາງກອກ, ປະເທດໄທ ໃນ 2 ໂຄງການນັ້ນ (ໂຄງການປັບປຸງຖະໜົນ ມິດຕະພາບ ລາວ-ໄທ ແລະ ໂຄງການປັບປຸງສວນສີໂຄດຕະບອງ), ແມ່ນສະເໜີໃຫ້ພະແນກການຕ່າງປະເທດ ນະຄອນຫຼວງວຽງຈັນ ປະສານຕື່ມວ່າເພິ່ນຍັງຈະຊ່ວຍເຫຼືອບໍ່ ແລະ ໃຊ້ເວລາດົນປານໃດ ເພາະນະຄອນຫຼວງ ວຽງຈັນ ຕ້ອງການພັດທະນາ ໂດຍສະເພາະສວນສີໂຄດຕະບອງ;

(5) ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ໄດ້ປັບປຸງຮ່າງແຈ້ງການທາບທາມບໍລິສັດທີ່ຈະ ເຂົ້າຮ່ວມຮັບເໝົາບໍລິການ ແລະ ບົວລະບັດຮັກສາສວນສີໂຄດຕະບອງ ຢູ່ບ້ານໜອງດ້ວງເໜືອ, ເມືອງສີໂຄດ ຕະບອງ ນະຄອນຫຼວງວຽງຈັນ ສໍາເລັດໂດຍພື້ນຖານ (ໄດ້ຄັດຕິດຮ່າງແຈ້ງການມາພ້ອມນີ້).

**ມາຮອດນີ້, ການລາຍງານຂອງຂ້າພະເຈົ້າ** ກ່ຽວກັບການພັດທະນາສວນສີໂຄດຕະບອງ ຢູ່ບ້ານໜອງດ້ວງເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ກໍໄດ້ສິ້ນສຸດລົງແລ້ວ, ສະເໜີຂໍທິດຊີ້ນໍາຕາມເຫັນສົມຄວນດ້ວຍ. ຂໍ ຂອບໃຈ,